# ປັດໃຈທີ່ມີຜົນຕໍ່ການຕັດສິນໃຈບໍລິໂພກ ຜັກກະສິກຳສະອາດ ໃນນະຄອນປາກເຊ ແຂວງຈຳປາສັກ

**ຈັນທະສັກ ສຸພັກດີ[1], ຂານດາລາ ຄຳພິລາ[2], ສັນຕິ ໂສພາ[3], ເພັດວົງຄອນ ວົງລະຄອນ[4]**

*ການພັດທະນາຊຸມຊົນແບບຍືນຍົງ, ຄະນະເສດຖະສາດ ແລະ ການຄຸ້ມຄອງ, ມະຫາວິທະຍາໄລຈຳປາສັກ*

## ບົດຄັດຫຍໍ້

ການສຶກສາປັດໃຈ ທີ່ມີຜົນຕໍ່ການຕັດສິນໃຈບໍລິໂພກຜັກກະສິກຳສະອາດ ໃນນະຄອນປາກເຊ ແຂວງຈຳປາສັກ ມີຈຸດປະສົງເພື່ອ 1) ເພື່ອສຶກສາຫາລະດັບຄວາມສຳຄັນຂອງປັດໃຈ ທີ່ມີຜົນຕໍ່ການຕັດສິນໃຈບໍລິໂພກຜັກກະສິກຳສະອາດ ໃນນະຄອນປາກເຊ ແຂວງຈຳປາສັກ. 2) ເພື່ອປຽບທຽບປັດໃຈທີ່ມີຜົນຕໍ່ການຕັດສິນໃຈບໍລິໂພກຜັກກະສິກຳສະອາດ ໃນນະຄອນປາກເຊ ແຂວງຈຳປາສັກ ໂດຍແຍກຕາມຂໍ້ມູນທົ່ວໄປຂອງຜູ້ບໍລິໂພກພາຍໃນນະຄອນປາກເຊ ແຂວງຈຳປາສັກ. 3) ເພື່ອສຶກສາຫາຄວາມສຳພັນຂອງ ປັດໃຈທີ່ມີຜົນຕໍ່ການຕັດສິນໃຈບໍລິໂພກຜັກກະສິກຳສະອາດ ໃນນະຄອນປາກເຊ ແຂວງຈຳປາສັກ. ກຸ່ມຕົວຢ່າງທີ່ໃຊ້ໃນການວິໄຈຄັ້ງນີ້ແມ່ນຜູ້ບໍລິໂພກພາຍໃນແຂວງຈຳປາສັກ, ທີ່ຕັດສິນໃຈຊື້ຜັກກະສິກຳສະອາດມາບໍລິໂພກ, ພາຍໃນນະຄອນປາກເຊ ແຂວງຈຳປາສັກ. ຈຳນວນ 400 ຕົວຢ່າງ , ໂດຍໃຊ້ວິທີການສຸ່ມແບບງ່າຍດາຍ ແລະ ໃຊ້ແບບສອບຖາມເປັນເຄື່ອງມືໃນການວິໄຈ, ສະຖິຕິທີ່ໃຊ້ວິເຄາະຫາຂໍ້ມູນແມ່ນໃຊ້ສະຖິຕິພັນລະນາ ຫຼື ການຫາຄ່າສະຖິຕິພື້ນຖານ ເຊັ່ນ: ຄ່າຄວາມຖີ່, ສ່ວນຮ້ອຍ, ຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕະຖານ. ທົດສອບສົມມຸດຖານດ້ວຍ Inference statistic ຄື t-test ການວິເຄາະຫາຄວາມຜັນປ່ຽນທາງດຽວ ຫຼື F-test ການວິເຄາະຫາຄ່າຄວາມແຕກຕ່າງ ຄ່າສະເລ່ຍແບບຄູ່ດ້ວຍວິທີ Least-square test: LSD) ແລະ Pearson Correlation.

ຜົນຂອງການສຶກສາ ໄດ້ສະແດງໃຫ້ເຫັນວ່າ 1) ປັດໃຈ ທີ່ມີຜົນຕໍ່ການຕັດສິນໃຈບໍລິໂພກຜັກກະສິກຳສະອາດ ໃນນະຄອນປາກເຊ ແຂວງຈຳປາສັກ. ໂດຍລວມແລ້ວແມ່ນຢູ່ໃນລະດັບຫຼາຍທີ່ສຸດ ມີຄ່າສະເລ່ຍທີ່ 4.51. 2) ປຽບທຽບປັດໃຈ ທີ່ມີຜົນຕໍ່ການຕັດສິນໃຈບໍລິໂພກຜັກກະສິກຳສະອາດ ໃນນະຄອນປາກເຊ ແຂວງຈຳປາສັກ. ໂດຍຈຳແນກຕາມຂໍ້ມູນທົ່ວໄປຂອງຜູ້ບໍລິໂພກ ເຫັນວ່າ ຜູ້ບໍລິໂພກທີ່ມີເພດ ແຕກຕ່າງກັນ, ໄດ້ໃຫ້ຄວາມສຳຄັນຂອງປັດໃຈທີ່ມີຜົນຕໍ່ການຕັດສິນໃຈບໍລິໂພກຜັກກະສິກຳສະອາດ ບໍ່ແຕກຕ່າງກັນ. ຜູ້ບໍລິໂພກທີ່ມີອາຍຸ, ອາຊີບ, ລາຍໄດ້ ແຕກຕ່າງກັນ ໄດ້ໃຫ້ລະດັບຄວາມສຳຄັນຂອງປັດໃຈທີ່ມີຜົນຕໍ່ການຕັດສິນໃຈບໍລິໂພກຜັກກະສິກຳສະອາດ ບໍ່ແຕກຕ່າງກັນ. ຜູ້ບໍລິໂພກທີ່ມີລະດັບການສຶກສາ ແຕກຕ່າງກັນ ໄດ້ໃຫ້ລະດັບຄວາມສຳຄັນຂອງປັດໃຈທີ່ມີຜົນຕໍ່ການຕັດສິນໃຈບໍລິໂພກຜັກກະສິກຳສະອາດ ແຕກຕ່າງກັນ. 3) ສຶກສາຫາຄວາມສຳພັນຂອງ ປັດໃຈທີ່ມີຜົນຕໍ່ການຕັດສິນໃຈບໍລິໂພກຜັກກະສິກຳສະອາດ ໃນນະຄອນປາກເຊ ແຂວງຈຳປາສັກ ເຫັນວ່າຄວາມສຳພັນຂອງປັດໃຈທີ່ມີຜົນຕໍ່ການຕັດສິນໃຈບໍລິໂພກຜັກກະສິກຳສະອາດ ພາຍໃນນະຄອນປາກເຊ ແຂວງຈຳປາສັກມີຄວາມສຳພັນໂດຍລວມລະດັບສູງຫາສູງຫຼາຍ.

---

[1] *ຄະນະເສດຖະສາດ ແລະ ການຄຸ້ມຄອງ ມະຫາວິທະຍາໄລຈຳປາສັກ, ອີເມວ: Souphakdychanthasak@gmail.com*

[2] *ຄະນະວິສະວະກຳສາດ ມະຫາວິທະຍາໄລຈຳປາສັກ, ອີເມວ: Khandala34@gmail.com*

[3] *ຄະນະເສດຖະສາດ ແລະ ການຄຸ້ມຄອງ, ມະຫາວິທະຍາໄລຈຳປາສັກ, ອີເມວ: Santidoungvilai@gmail.com*

[4] *ຄະນະເສດຖະສາດ ແລະ ການຄຸ້ມຄອງ, ມະຫາວິທະຍາໄລຈຳປາສັກ, ອີເມວ: Phetvonglakhone@gmail.com*

# Factors Affecting on Decision to Consume Clean-Agricultural Vegetable in Pakse City Champasak Province

**Chanthasack Souphakdy[1], Khandala KHAMPHILA[2], Author C[3]**

*Sustainable community development, faculty of Economic and Management, Champasack University*

ABSTRACT

Study (Factors Affecting on decision to consume clean-agricultural vegetables in Pakse City Champasak Province aimed to 1) to study the importance of factors affecting the decision on consume clean-agricultural vegetables in Pakse city Champasak Province 2) To compare factors affecting the decision on consume clean-agricultural vegetables in Pakse City. Champasak Province By separating general information of consumers in Pakse city. Champasak Province 3) To study the relationship of factors affecting the decision on consume clean-agricultural vegetables in Pakse City. Champasak Province. The sample group used in this research are customer buying decision vegetables from clean-agriculture in Pakse City Champasak Province, amounting to 400 samples, The research tool was questionnaire, data analysis with descriptive statistics or basic statistics such as frequency, percentage, mean and standard deviation, hypothesis testing using inference statistics such as t-test, One-Way ANOVA or F-test and Post-hoc comparison by LSD and Pearson Correlation.

The results of this study found that: 1) Factors Affecting Customer  Buying Decision of Vegetables from Clean-Agriculture  in Pakse City Champasak Province are generally at a high level with an average value of 4.51. 2) Compare the factors that affect the decision to choose a buying vegetable from clean-agriculture by distinguishing according to the general information of customer, seeing that customer with different genders have given the importance of the factors that affect the decision to choose buying vegetables from

---

[1] **Corresponding Author:** Chanthasak SOUPHAKDY, Faculty of Economic and Management, Email: Souphakdychanthasak@gmail.com

[2] Khandala KHAMPHILA, Faculty of Engineering, Champasack University, Email: Khandala34@gmail.com

[3] Santi SOPHA, Faculty of Economic and Management, Email: Santidoungvilai@gmail.com

[4] Phetoudone VONGLAKHONE, Faculty of Economic and Management, Email: Phetvonglakhone@gmail.com

clean-agriculture that is not different. Next customer of different age, occupation, income have given the importance of the factors that affect the decision to choose buying decision vegetables from clean-agriculture that is not different, and Tourists of different level of education with different have given the importance of the factors that affect the decision to choose buying decision vegetables from clean-agriculture that is different 3) Study the relationship of factors affecting the decision on consume clean-agricultural vegetables in Pakse Champasak Province found that the relationship between factors affecting the decision on consume clean-agricultural vegetables in Pakse City Champasak Province has a high to very high overall relationship.

**Keywords:** Factors, Clean-agriculture vegetables

## 1. ພາກສະເໜີ

ນັບແຕ່ຊຸມປີ 2010 ເປັນຕົ້ນມາ, ຜູ້ຄົນສ່ວນຫຼາຍໄດ້ຫັນມາໃສ່ໃຈສຸຂະພາບ, ໂດຍສະເພາະກໍ່ຄືການບໍລິໂພກອາຫານ ທີ່ມີຄວາມປອດໄພ, ເຊິ່ງວ່າ ຜູ້ບໍລິໂພກເລີ່ມຫັນມາເຫັນຄວາມສຳຄັນຄວາມປອດໄພຂອງອາຫານ ທີ່ກິນຢູ່ໃນຊີວິດປະຈຳວັນ ມີການໃຫ້ຄວາມສົນໃຈຕໍ່ປະໂຫຍດທາງໂພຊະນາການ ຄວາມຮູ້ໃນດ້ານຄວາມປອດໄພຂອງຫານ ບໍ່ວ່າຈະເປັນ ການສົນໃຈແຫຼ່ງທີ່ມາຂອງວັດຖຸດິບ ການປັບແຕ່ງພັນທຸກຳຕ່າງໆ ເປັນຕົ້ນ (ທະວັນຍາ ສີທິຍົດ ແລະ ທີລະເວດ ທິດສີແສງ, 2016) ເຮັດໃຫ້ຜູ້ບໍລິໂພກສ່ວນເລີ່ມເຫັນຄວາມສຳຄັນໃນເລື່ອງນີ້ ແລະ ຫັນມາໃສ່ໃຈບໍລິໂພກອາຫານທີ່ມີປະໂຫຍດຕໍ່ສຸຂະພາບຫຼາຍຂຶ້ນກວ່າເກົ່າ

ຈາກການທີ່ຜູ້ຄົນເລີ້ມຕື່ນໂຕໃນການບໍລິໂພກອາຫານເພື່ອສຸຂະພາບ ໂດຍສະເພາະແມ່ນຈຳພວກຜັກທີ່ຜູ້ບໍລິໂພກຈະຄິດເຫັນປະໂຫຍດເປັນອັນດັບທຳອິດ ຍ້ອນວ່າຜັກນັ້ນມີຄຸນປະ ໂຫຍດຫຼາຍຕໍ່ຮ່າງກາຍເປັນແຫຼ່ງສຳຄັນຂອງທາດອາຫານທີ່ຈຳເປັນຕໍ່ຮ່າງກາຍມະນຸດ ອຸດົມສົມບູນໄປດ້ວຍທາດເຫຼັກ, ແຄວຊຽມ ແລະ ວິຕາມິນຕ່າງໆ ທີ່ຈຳເປັນຕໍ່ຮ່າງກາຍ ເຖິງວ່າຜັກຈະອຸດົມສົມບູນໄປດ້ວຍສານອາຫານທີ່ເປັນປະໂຫຍດຕໍ່ຮ່າງກາຍ ແຕ່ຜັກ ສ່ວນໃຫຍ່ກໍ່ຍັງມີສານປົນເປື້ອນຕ່າງໆ ທີ່ໃຫ້ໂທດແກ່ຜູ້ບໍລິໂພກ (ອອນນຸດ ອາດປະຈົນ ແລະ ເບນຈາມາດ ອິສອນເດດ, 2015) ຈຶ່ງເຮັດໃຫ້ເກີດມີອາຫານອໍແກນິກ (Organic Food) ຂຶ້ນ ເອີ້ນອີກຢ່າງໜຶ່ງວ່າ “ອາຫານກະເສດອິນຊີ” ຫຼື “ອາຫານອິນຊີ” ເປັນອາຫານທີ່ຜ່ານການຜະລິດທາງການກະສິກຳ ໂດຍບໍ່ໃຊ້ສານເຄມີປຸ໋ຍເຄມີ, ວັດຖຸສັງເຄາະອື່ນໆ ຂະບວນການຜະລິດບໍ່ມີການໃຊ້ສານເຄມີໃນການກຳຈັດສັດຕູພືດກ່ອນການປູກຈະຕ້ອງກະກຽມໜ້າດິນດ້ວຍວິທີທຳມະຊາດ ທຸກຂັ້ນຕອນການຜະລິດຈະບໍ່ມີສານປົນເປື້ອນທີ່ເກີດຈາກໂຮງງານອຸດສະຫະກຳ ຫຼືຈາກມະນຸດເຮົາເອງ ເຊິ່ງໃນປັດຈຸບັນສິນຄ້າອໍແກນິກ ຫຼື ຜະລິດຕະພັນອໍແກນິກ ຈະຖືກແບ່ງອອກເປັນປະເພດຕ່າງໆ ຕາມສັດສ່ວນຂອງສ່ວນຜະສົມ ແລະ ວັດຖຸດິບທີ່ເກີດຈາກການປູກດ້ວຍຂະບວນການອໍແກນິກ ຕັ້ງ ແຕ່ 75-100% ໂດຍການຄວບຄຸມ ແລະ ການກວດສອບມາດຕະ ຖານຂອງໜ່ວຍງານທີ່ໄດ້ຮັບການຍອມຮັບ (ມູລະນິທິກະສິກຳຍືນຍົງ, 2014)

ໃນປະເທດລາວ ປະມານ 83% ຂອງປະຊາກອນ ແມ່ນຢູ່ໃນເຂດຊົນນະບົດ ແລະ 66% ແມ່ນເພິ່ງພາການກະເສດເປັນການລ້ຽງຊີບ ເຊິ່ງວ່າການກະເສດເປັນຂະບວນການຜະລິດແບບດັ້ງເດີມ ຂຶ້ນຢູ່ກັບປັດໃຈພາຍນອກ ເຊັ່ນ: ຖ້າຫາກຢູ່ເຂດຊົນນະບົດແທ້ໆ ຜົນຜະລິດທາງການກະເສດຈະແມ່ນເປັນການກະເສດແບບອໍແກນິກແບບອັດຕະໂນມັດ ສາມາດໃຈ້ແຍກອອກເປັນ 4 ລະບົບທີ່ແຕກຕ່າງກັນຄື: 1). ລະບົບການບຸກລຸກປ່າ ຫຼື ບ່ອນທີ່ຮົກຮ້າງ (ດ້ວຍການຈູດເຜົາ) ເພື່ອການຜະລິດເຂົ້າບໍລິໂພກພາຍໃນຄົວເຮືອນ ຕົ້ນເດືອຍ, ງາ ແລະ ເຂົ້າໂພດ ເປັນພືດທີ່ສຳຄັນທີ່ສຸດໃນສິ່ງອອກ ເຖິງວ່າຈະບໍ່ໄດ້ຖືກຮັບ ຮອງຢ່າງເປັນທາງການ ແຕ່ມັນກໍ່ເປັນພືດທີ່ເອີ້ນໄດ້ວ່າ “ປູກແບບອໍແກນິກ”, 2). ລະບົບຜົນຜະລິດທີ່ເກັບໄດ້ຈາກປ່າ ແລະ ດິນຮົກຮ້າງ ເພື່ອການບໍລິໂພກພາຍໃນຄົວເຮືອນ, ຂາຍໃນຕະ ຫຼາດທ້ອງຖິ່ນ ແລະ ເພື່ອການສົ່ງອອກ ເຊິ່ງປະກອບມີ: ໜໍ່ໄມ້, ໜໍ່ກ້ວຍ ແລະ ຈຳພວກຫວ້ານປ່າ (Amomum sp), 3). ລະ ບົບໝາກໄມ້ ເຊິ່ງສ່ວນໃຫຍ່ຜະລິດໂດຍບໍ່ແມ່ນປັດໄຈພາຍນອກ, 4). ລະບົບການຜະລິດການກະເສດອິນຊີ ທີ່ສາມາດຂັບເຂື່ອນ

ຕະຫຼາດໂດຍສ່ວນໃຫຍ່ຈະເປັນ “ອໍແກນິກແບບອັດຕະ ໂນມັດ” ແຕ່ມັກຈະບໍ່ໄດ້ຖືກຍອມຮັບວ່າເປັນອໍແກນິກໂດຍແທ້ (Sipaseuth et al. 2004).

ແຕ່ປີ 2004 ເປັນຕົ້ນມາ ກະສິກຳອິນຊີ ໄດ້ພັດທະນາຈາກກະສິກຳແບບທຳມະຊາດເຂົ້າສູ່ລະບົບການຜະ ລິດທີ່ມີມາດຕະຖານ ທີ່ມີການເຊື່ອມໂຍງກັບພາກພື້ນ ແລະ ສາກົນ, ເປັນຕົ້ນແມ່ນ ການພັດທະນາອົງກອນ ດ້ານນິຕິກຳ, ບຸກຄະລາກອນການຜະລິດ, ການຕະຫລາດ, ລະບົບການຢັ້ງຢືນການຜະລິດ. ກະສິກຳອິນຊີ ຢູ່ລາວ ແມ່ນມີຢູ່ 02 ແບບ ເຊັ່ນ: ການຜະລິດແບບຟາມດຽວ (ບໍລິສັດ) ແລະ ການຜະລິດແບບລວມໂຕຈັບເປັນກຸ່ມຜະລິດ ສຳລັບການຜະລິດກະສິກຳທີ່ດີເລີ່ມມາແຕ່ປີ 2012 ໄດ້ດັດປັບມາດຕະຖານກະສິກຳທີ່ດີຂອງອາຊຽນ ມາຮັບໃຊ້ ເປັນມາດຕະຖານໃນລາວຕະຫລອດໄລຍະການຜະລິດກະສິກຳທີ່ດີໄດ້ສ້າງ ແລະ ພັດທະນາຫລັກສູດອົບຮົມ, ສ້າງສວນຕົວແບບ ວິຊາການໂຄສະນາເຜີຍແຜ່ຕາມຫລັກການ ແລະ ຮູບແບບຂອງການພັດທະນາກະສິກຳອິນຊີ ເຊິ່ງວ່າ ການຜະລິດກະສິກຳທີ່ດີ (ພອນທິບ ສີມມະນີ, 2020).

## 2. ຈຸດປະສົງ

2.1 ເພື່ອສຶກສາຫາລະດັບຄວາມສຳຄັນຂອງປັດໄຈ ທີ່ມີຜົນຕໍ່ການຕັດສິນໃຈບໍລິໂພກຜັກກະສິກຳສະ ອາດ ໃນນະຄອນປາກເຊ ແຂວງຈຳປາສັກ

2.2 ເພື່ອປຽບທຽບປັດໄຈທີ່ມີຜົນຕໍ່ການຕັດສິນໃຈບໍ ລິໂພກຜັກກະສິກຳສະອາດ ໃນນະຄອນປາກເຊ ແຂວງຈຳປາສັກ ໂດຍແຍກຕາມຂໍ້ມູນທົ່ວໄປຂອງຜູ້ບໍລິໂພກ ໃນນະຄອນປາກເຊ ແຂວງຈຳປາສັກ

2.3 ເພື່ອສຶກສາຫາຄວາມສຳພັນຂອງ ປັດໄຈທີ່ມີຜົນຕໍ່ການຕັດສິນໃຈ ບໍລິໂພກຜັກກະສິກຳສະອາດ ໃນນະຄອນປາກເຊ ແຂວງຈຳປາສັກ

## 3. ວິທີການຄົ້ນຄວ້າ

### 3.1 ການອອກແບບການສຶກສາ

ການສຶກສາຄັ້ງນີ້ ເປັນງານວິໄຈໃນຮູບແບບສາຫຼວດ (Survey Research) ທີ່ມີຮູບແບບການວິໄຈໂດຍນຳໃຊ້ແບບສອບຖາມປາຍປິດ (Close-end Questionnaire) ເຊິ່ງປະ ກອບດ້ວຍຂໍ້ມູນປັດໄຈສ່ວນບຸກຄົນ, ການຮັບຮູ້ຄຸນຄ່າດ້ານລາຄາ, ການຮັບຮູ້ຄຸນຄ່າດ້ານຄວາມປອດໄພ, ການຮັບຮູ້ຄຸນຄ່າດ້ານສຸຂະພາບ, ການຮັບຮູ້ຄຸນຄ່າດ້ານສິ່ງແວດລ້ອມ ແລະ ການຮັບຮູ້ຄຸນຄ່າດ້ານຄຸນະພາບຂອງຜະລິດຕະພັນເປັນເຄື່ອງມືໃນການລວບລວມ.

### 3.2 ການກຳນົດກຸ່ມຕົວຢ່າງ

ການສຶກສາຄັ້ງນີ້ແມ່ນໄດ້ຄັດເລືອກເອົາກຸ່ມຜູ້ບໍລິໂພກຜັກທີ່ຢູ່ພາຍໃນນະຄອນປາກເຊ, ເນື່ອງຈາກວ່ານະຄອນປາກເຊ ເປັນເຂດຕົວເມືອງຂອງແຂວງຈຳປາສັກ ມີປະຊາກອນທັງໝົດ 771,704 ຄົນ, ມີ 137,907 ຄົວເຮືອນ, ຄວາມໜາແໜ້ນຂອງພົນລະເມືອງ 47.21 ຄົນ/1 ຕາລາງກິໂລແມັດ (ພະແນກສາທາລະນະສຸກແຂວງຈຳປາສັກ, 2023) ແຂວງຈຳປາສັກ ກໍ່ເປັນແຂວງໜຶ່ງ ທີ່ມີທ່າແຮງໃນການຂັບເຄື່ອນໃນການພັດທະນາປະເທດຊາດ ເພາະວ່າມີຄວາມຈະ ເລີນເຕີບໂຕທາງດ້ານເສດຖິດ-ສັງຄົມເປັນອັນດັບຕົ້ນໆຂອງປະເທດລາວ ຮອງຈາກນະຄອນຫຼວງວຽງຈັນ (ວິກິພີເດຍ ສາລານຸກົມເສລີ, 2022) ມີຜະລິດຕະພັນທາງດ້ານກະສິກຳຫຼາກຫຼາຍ ແລະ ທັງເປັນຈຸດສູນກາງ ໃນການແລກປ່ຽນຊື້ຂາຍ ໂດຍເສດຖະກິດຂະຫຍາຍຕົວລະດັບ 8,04% ລວມຍອດມູນຄ່າຜະລິດຕະພັນພາຍໃນ (GDP) ບັນລຸໄດ້ 12.711 ຕື້ກີບ, ການກະສິກຳກວມ 26%, ອຸດສາຫະກຳ 35% ແລະ ບໍລິການກວມ 39% ຂອງ GDP (ວິກິພີເດຍ ສາລານຸ ກົມເສລີ, 2022). ການກຳນົດກຸ່ມຕົວຢ່າງໃນການສຶກສາຄັ້ງນີ້ແມ່ນຜູ້ບໍລິໂພກຜັກກະສິກຳສະອາດໃນນະຄອນປາກເຊ, ເຊິ່ງບໍ່ສາມາດກຳນົດຈຳ ນວນໄດ້, ດັ່ງນັ້ນຈຶ່ງໃຊ້ວິທີການເລືອກກຸ່ມຕົວຢ່າງແບບບໍ່ຮູ້ຈຳນວນປະຊາກອນ (Infinite Population) ໄດ້ກຳນົດຂະໜາດກຸ່ມຕົວຢ່າງໂດຍໃຊ້ສູດ Cochran, W.G. (1977)

ສູດ $$n = \frac{P(1-P)Z^2}{E^2}$$

n ແມ່ນ ຂະໜາດຕົວຢ່າງ

P ແມ່ນ ສັດສ່ວນຂອງປະຊາກອນທີ່ຜູ້ວິໄຈກໍາລັງສຸ່ມ 0.50

Z ແມ່ນລະດັບຄວາມເຊື່ອໝັ້ນທີ່ຜູ້ວິໄຈກາໜົດໄວ້ Z ມີຄ່າເທົ່າກັບ 1.96 ດ້ວຍລະດັບຄວາມເຊື່ອໝັ້ນ ຮ້ອຍລະ 95 (ລະດັບ 0.05)

E ແມ່ນຄ່າຄວາມຜິດພາດສູງສຸດທີ່ເກີດຂຶ້ນ = 0.05

ໄດ້ຂະໜາດກຸ່ມຕົວຢ່າງ ຢ່າງໜ້ອຍ 384 ຄົນ ຈຶ່ງຈະສາມາດປະມານຄ່າເປັນເປີເຊັນ ໂດຍມີຄວາມຜິດພາດບໍ່ເກີນ 5% ທີ່ລະດັບຄວາມເຊື່ອໝັ້ນ 95% ເພື່ອສະດວກໃນການປະເມີນຜົນ ແລະ ການວິເຄາະຂໍ້ມູນ ຜູ້ວິໄຈໃຊ້ຂະໜາດກຸ່ມຕົວຢ່າງທັງໝົດ 400 ຕົວຢ່າງ ເຊິ່ງຖືວ່າໄດ້ຜ່ານເກນຕາມເງື່ອນໄຂທີ່ໄດ້ກໍານົດໄວ້ ຄື: ບໍ່ໜ້ອຍກວ່າ 384 ຕົວຢ່າງ

### 3.3 ລັກສະນະຂອງເຄື່ອງມື

ການວິໄຈຄັ້ງນີ້ເປັນການວິໄຈຮູບແບບປະລິມານ ໂດຍເຄື່ອງມືທີ່ໃຊ້ໃນການວິໄຈເປັນແບບສອບຖາມ (Questionnaire) ເຊິ່ງສ້າງຂຶ້ນຕາມຈຸດປະສົງ ແລະ ກອບແນວຄິດການວິ ໄຈ ເປັນເຄື່ອງມືທີ່ໃຊ້ການເກັບລວບລວມ ຂໍ້ມູນການວິໄຈ ໂດຍແບ່ງເນື້ອໃນອອກເປັນ 3 ຕອນດັ່ງນີ້:

ຕອນທີ 1 ເປັນຄາຖາມປາຍປິດກ່ຽວກັບປັດໄຈສ່ວນບຸກຄົນຂອງຜູ້ຕອບແບບສອບຖາມລັກສະນະຂອງຂໍ້ຄໍາຖາມເປັນແບບກວດສອບລາຍການ (Check list) ປະກອບດ້ວຍເພດ, ອາຍຸ, ລະດັບການສຶກສາ, ອາຊີບ, ລາຍໄດ້ສະເລ່ຍຕໍ່ເດືອນ.

ຕອນທີ 2 ເປັນຄໍາຖາມປາຍປິດກ່ຽວກັບລະດັບປັດໄຈທີ່ສົ່ງຜົນຕໍ່ການຕັດສິນໃຈບໍລິໂພກຜັກກະສິກໍາສະອາດ ພາຍໃນນະຄອນປາກເຊ ແຂວງຈໍາປາສັກ ໂດຍແບບຄໍາຖາມໃຊ້ມາດຕາສ່ວນປະມານຄ່າ (Rating scale) ຕາມແບບຂອງ Likert ເປັນຕົວວັດລະດັບຄື 5=ຫຼາຍທີ່ສຸດ, 4=ຫຼາຍ, 3=ປານກາງ, 2=ໜ້ອຍ ແລະ 1=ໜ້ອຍທີ່ສຸດ.

### 3.4 ສະຖິຕິທີ່ໃຊ້ໃນການວິເຄາະ

ໃນການວິເຄາະ ຂໍ້ມູນຜູ້ສຶກສາໄດ້ນໍາເອົາຫຼັກສະຖິຕິມາປະກອບການວິເຄາະ ຂໍ້ມູນດັ່ງນີ້

ກ. ສະຖິຕິທີ່ໃຊ້ໃນການວິເຄາະຂໍ້ມູນທົ່ວໄປຂອງຜູ້ຕອບແບບສອບຖາມ ໄດ້ແກ່ ການແຈກແຈງຄວາມຖີ່ ແລະ ຄ່າສະເລ່ຍ

ຂ. ສະຖິຕິທີ່ໃຊ້ ໃນການວິເຄາະລະດັບຄວາມຄິດເຫັນ ກ່ຽວກັບການຕັດສິນໃຈບໍລິໂພກຜັກກະສິກໍາສະ ອາດ ຄ່າສະເລ່ຍ (Mean) ແລະ ຄ່າພົນປ່ຽນມາດຕະຖານ (Standard Deviation)

ຄ. ສະຖິຕິທົດສອບສົມມຸດຖານວິໄຈ ຄື (Correlation Coefficients analysis) ໂດຍໃຊ້ສູດການຫາຄ່າ “r” ຫຼື ຄ່າສໍາປະສິດສໍາພັນ (Correlation Coefficient) ຂອງ Pearson ເຊິ່ງມີຄ່າ ໃນຊ່ວງລະດັບຄວາມສໍາ ພັນ (Strength of association) 6 ລະດັບ ຄື: ລະດັບຄວາມສໍາພັນ 0.90-1.00 ໝາຍເຖິງມີຄວາມສໍາພັນທີ່ສົມບູນ, ລະດັບຄວາມສໍາພັນ 0.70-0.89 ໝາຍເຖິງ ມີຄວາມສໍາພັນລະດັບສູງຫຼາຍ, ລະດັບຄວາມສໍາພັນ 0.50-0.69 ໝາຍເຖິງ ມີຄວາມສໍາພັນລະດັບສູງ, ລະດັບຄວາມສໍາພັນ 0.30-0.49 ໝາຍເຖິງ ມີຄວາມສໍາພັນລະດັບກາງ, ລະດັບຄວາມສໍາພັນ 0.10-0.29 ໝາຍເຖິງ ມີຄວາມສໍາພັນລະດັບຕໍ່າ ແລະ ລະດັບຄວາມສໍາພັນ 0.01-0.09 ໝາຍເຖິງ ມີຄວາມສໍາພັນໜ້ອຍສຸດ

## 4. ຜົນໄດ້ຮັບ

### 4.1 ຜົນການວິເຄາະຂໍ້ມູນທົ່ວໄປຂອງຜູ້ຕອບແບບສອບຖາມ

ຈາກຜົນຂອງການສຶກາ ເຫັນໄດ້ວ່າ ໃນນະຄອນປາກເຊ ແຂວງຈໍາປາສັກ ໃນການວິເຄາະເຫັນວ່າ ຜູ້ທີ່ບໍລິໂພກຜັກກະສິກໍາສະອາດທີ່ເປັນກຸ່ມຕົວຢ່າງ ທີ່ຕອບແບບສອບຖາມສ່ວນຫຼາຍເປັນເພດຍິງມີຈໍານວນ 266 ຄົນ, ຄິດໄລ່ເປັນສ່ວນຮ້ອຍໄດ້

66.50%, ເພດຊາຍ ຈຳນວນ 134 ຄົນ, ຄິດໄລ່ເປັນສ່ວນຮ້ອຍໄດ້ 33.50%. ບໍລິໂພກຜັກກະສິກຳສະອາດ ທີ່ເປັນກຸ່ມຕົວຢ່າງສ່ວນຫຼາຍເປັນຜູ້ທີ່ມີອາຍຸລະຫວ່າງ 21-30 ປີ ຈຳນວນ 191 ຄົນ, ຄິດໄລ່ເປັນສ່ວນຮ້ອຍໄດ້ 47.75%, ຮອງລົງມາ ແມ່ນຜູ້ທີ່ອາຍຸລະຫວ່າງ 31-40 ປີ, ຈຳນວນ 161 ຄົນ, ຄິດໄລ່ເປັນສ່ວນຮ້ອຍໄດ້ 40.25%. ຜູ້ທີ່ມີອາຍຸລະຫວ່າງ 41-50 ປີ ມີຈຳນວນ 36 ຄົນ, ຄິດໄລ່ເປັນສ່ວນຮ້ອຍແມ່ນ 9.00%, ທີ່ມີອາຍຸບໍ່ເກີນ 20 ປີ ມີຈຳນວນ 6 ຄົນ ເຊິ່ງສາມາດຄິດໄລ່ເປັນສ່ວນຮ້ອຍໄດ້ 1.50%. ຜູ້ທີ່ມີອາຍຸ 51 ປີ ຂຶ້ນໄປ, ມີຈຳນວນ 6 ຄົນ, ຄິດໄລ່ເປັນສ່ວນຮ້ອຍແມ່ນ 1.50%. ທີ່ຜູ້ຕອບແບບສອບຖາມສ່ວນຫຼາຍມີການສຶກສາປະລິນຍາຕີຈຳນວນ 172 ຄົນ, ກວມເອົາ 43% ເປັນຈຳນວນຫຼາຍກວ່າໝູ່, ຜູ້ທີ່ມີລະດັບການສຶກສາຕ່ຳກວ່າປະລິນຍາຕີ ຈຳນວນ 172 ຄົນ, ຄິດໄລ່ເປັນສ່ວນຮ້ອຍ ແມ່ນ 34.50%, ຜູ້ທີ່ມີລະດັບການສຶກສາສູງກວ່າປະລິນຍາຕີ ຈຳນວນ 90 ຄົນ, ຄິດໄລ່ເປັນ 22.50%. ສາລັບອາຊີບ ສ່ວນຫຼາຍເປັນພະນັກງານລັດ ຈຳນວນ 97 ຄົນ, ຄິດໄລ່ເປັນສ່ວນຮ້ອຍໄດ້ 249.25%, ຮອງລົງມາ ແມ່ນຜູ້ທີ່ມີອາຊີບເປັນເຈົ້າຂອງທຸລະກິດ/ອາຊີບອິດສະຫຼະ, ຈຳນວນ 91 ຄົນ, ຄິດໄລ່ເປັນສ່ວນຮ້ອຍໄດ້ 22.75%. ຜູ້ທີ່ມີອາຊີບເປັນພະນັກງານເອກະຊົນ ມີຈຳນວນ 65 ຄົນ, ຄິດໄລ່ເປັນສ່ວນຮ້ອຍແມ່ນ 16.25%, ທີ່ມີອາຊີບເປັນແມ່ບ້ານ/ພໍ່ບ້ານ ມີຈຳນວນ 63 ຄົນ ເຊິ່ງສາມາດຄິດໄລ່ເປັນສ່ວນຮ້ອຍໄດ້ 15.75%. ຜູ້ທີ່ມີອາຊີບເປັນນັກຮຽນ-ນັກສຶກສາ ມີຈຳນວນ 7 ຄົນ, ຄິດໄລ່ເປັນສ່ວນຮ້ອຍແມ່ນ 1.75%. ເມື່ອເວົ້າເຖິງລາຍໄດ້ຕໍ່ເດືອນແມ່ນ ລາຍໄດ້ຕໍ່ເດືອນ ແມ່ນຜູ້ທີ່ມີລາຍໄດ້ລະຫວ່າງ 1,501,000-3,000,000 ກີບ ຂຶ້ນໄປມີຈຳນວນຫຼາຍກວ່າໝູ່ແມ່ນ 233 ຄົນ, ເຊິ່ງກວມເອົາ 58.25%, ຜູ້ທີ່ມີລາຍໄດ້ຢູ່ລະຫວ່າງ 4,501,000-5,500,000 ກີບ ມີຈຳນວນ 65 ຄົນ, ຄິດໄລ່ເປັນສ່ວນຮ້ອຍ 16.25%, ຜູ້ທີ່ມີລາຍໄດ້ຢູ່ລະຫວ່າງ 3,001,000-4,500,000 ກີບ ມີຈຳນວນ 34 ຄົນ, ຄິດໄລ່ເປັນສ່ວນຮ້ອຍແມ່ນ 8.50%, ຜູ້ທີ່ມີລາຍໄດ້ຕ່ຳ່ກວ່າ 1,500,000 ກີບລົງໄປ ຈຳນວນ 34 ຄົນ , ຄິດໄລ່ເປັນສ່ວນຮ້ອຍ 8.50%, ຜູ້ທີ່ມີລາຍໄດ້ຕ່ຳ່ກວ່າ 5,501,000 ກີບ ຂຶ້ນໄປ ຈຳນວນ 34 ຄົນ, ຄິດໄລ່ເປັນສ່ວນຮ້ອຍ 8.50%.

### 4.2 ລະດັບຂອງປັດໄຈທີ່ມີຜົນຕໍ່ການຕັດສິນໃຈບໍລິໂພກຜັກກະສິກຳສະອາດ

ຈາກຜົນຂອງການສຶກສາເຫັນໄດ້ລະດັບຄວາມສຳຄັນ ຂອງບັນດາປັດໄຈທີ່ມີຜົນຕໍ່ການຕັດສິນໃຈບໍລິໂພກຜັກກະສິກຳສະອາດ ພາຍໃນນະຄອນປາກເຊ ແຂວງຈຳປາສັກ, ໂດຍລວມ ມີຄ່າສະເລ່ຍ 4.51 ເຊິ່ງຢູ່ໃນລະດັບຫຼາຍທີ່ສຸດ, ເມື່ອແຍກຕາມແຕ່ລະປັດໄຈທີ່ສົ່ງຜົນຕໍ່ການຕັດສິນໃຈບໍລິໂພກຜັກກະສິກຳສະອາດແລ້ວ ເຫັນວ່າ: ການຮັບຮູ້ທາງດ້ານຜະລິດຕະພັນ ມີຄ່າສະເລ່ຍ 4.56 ຢູ່ໃນລະດັບຄວາມສຳຄັນຫຼາຍທີ່ສຸດ, ຕໍ່ມາແມ່ນການຮັບຮູ້ທາງດ້ານຄວາມປອດໄພ ມີຄ່າສະເລ່ຍແມ່ນ 4.54 ຢູ່ໃນລະດັບຄວາມສຳຄັນຫຼາຍທີ່ສຸດ, ສ່ວນການຮັບຮູ້ທາງດ້ານສິ່ງແວດລ້ອມ ມີຄ່າສະເລ່ຍແມ່ນ 4.50 ມີລະດັບຄວາມສຳຄັນຫຼາຍທີ່ສຸດ, ການຮັບຮູ້ທາງດ້ານສຸຂະພາບ ມີຄ່າສະເລ່ຍແມ່ນ 4.48 ມີລະດັບຄວາມສຳຄັນຫຼາຍທີ່ສຸດ, ແລະການຮັບຮູ້ທາງດ້ານລາຄາ ມີຄ່າສະເລ່ຍທີ່ 4.46 ມີລະດັບຄວາມສຳຄັນຫຼາຍທີ່ສຸດ. ຜົນຂອງການວິເຄາະອອກມາແບບນີ້ ຜູ້ບໍລິໂພກໃຫ້ຄວາມສຳຄັນຕໍ່ກັບຮູບແບບຂອງຜະລິດຕະພັນເປັນສ່ວນຫຼາຍ ເນື່ອງຈາກຜູ້ບໍລິໂພກໃຫ້ຄວາມໃສ່ໃຈກັບຄວາມສົດ, ລົດຊາດ ແລະ ຄວາມງາມຂອງຜົນຜະລິດທາງດ້ານກະສິກຳສະອາດ.

### 4.3 ຜົນຂອງການປຽບທຽບຂໍ້ມູນທົ່ວໄປກັບລະດັບຂອງປັດໄຈທີ່ມີຜົນຕໍ່ການບໍລິໂພກຜັກກະສິກຳສະອາດ

### ກ. ປຽບທຽບທາງດ້ານເພດ

ຜູ້ບໍລິໂພກຜັກກະສິກຳສະອາດທີ່ເປັນເພດຊາຍ (ຄ່າສະເລ່ຍ=4.53) ໃຫ້ຄວາມສຳຄັນຕໍ່ປັດໄຈທີ່ມີຜົນຕໍ່ການຕັດສິນໃຈບໍລິໂພກຜັກກະສິກຳສະອາດ ພາຍໃນນະຄອນປາກເຊ ແຂວງຈຳປາສັກ ຫຼາຍກວ່າ ຜູ້ບໍລິໂພກຜັກກະສິກຳສະອາດທີ່ເປັນເພດຍິງ (ຄ່າສະເລ່ຍ=4.50)

ແຕ່ເມື່ອອະທິບາຍເຖິງການໃຫ້ຄວາມສຳຄັນຕໍ່ປັດໄຈທີ່ມີຜົນຕໍ່ການຕັດສິນໃຈບໍລິໂພກຜັກກະສິກຳສະອາດ ພາຍໃນນະຄອນປາກເຊ ແຂວງຈຳປາສັກ ແຍກເປັນຂໍ້ຍ່ອຍສັງເກດເຫັນວ່າ ເມື່ອຜູ້ບໍລິໂພກຜັກກະສິກຳສະອາດມີເພດແຕກຕ່າງກັນ ປັດໄຈການຮັບຮູ້ຄຸນຄ່າທາງດ້ານລາຄາ, ປັດໄຈດ້ານການຮັບຮູ້ດ້ານຄວາມປອດໄພ, ປັດໄຈດ້ານການຮັບຮູ້ດ້ານສຸຂະພາບ, ປັດໄຈດ້ານການຮັບຮູ້ຄຸນຄ່າດ້ານສຸຂະພາບ ແລະ ປັດໄຈທາງດ້ານຜະລິດຕະພັນ ທີ່ ບໍ່ແຕກຕ່າງກັນ.

### ຂ. ປຽບທຽບທາງດ້ານອາຍຸ

ຜົນຂອງ ການສຶກສາປັດໄຈ ທີ່ມີຜົນຕໍ່ການຕັດສິນໃຈບໍລິໂພກຜັກກະສິກຳສະອາດ ໃນນະຄອນປາກເຊ ແຂວງຈຳປາສັກ, ຜົນຂອງການສຶກສາປັດໄຈທີ່ມີຜົນຕໍ່ການຕັດສິນໃຈບໍລິໂພກຜັກກະສິກຳສະອາດ ໃນນະຄອນປາກເຊ ແຂວງຈຳປາສັກ ເຊິ່ງວ່າ ຜູ້ບໍລິໂພກຜັກກະສິກຳສະອາດອາຍຸລະຫວ່າງ 21-30 ປີ (ຄ່າສະເລ່ຍ=4.55) ໃຫ້ຄວາມສຳຄັນກັບບັນດາປັດໄຈທີ່ມີຜົນຕໍ່ການຕັດສິນໃຈບໍລິໂພກຜັກກະສິກຳສະອາດ ພາຍໃນນະຄອນປາກເຊ ແຂວງຈຳປາສັກ ໂດຍລວມ ຫຼາຍກວ່າ ຜູ້ທີ່ບໍລິໂພກຜັກກະສິກຳສະອາດທີ່ມີອາຍຸລະຫວ່າງ 31-40 ປີ (ຄ່າສະເລ່ຍ=4.51), ອາຍຸລະ 51 ປີ ຂຶ້ນໄປ (ຄ່າສະເລ່ຍ =4.45), ອາຍຸລະຫວ່າງ 41-50 ປີ (ຄ່າສະເລ່ຍ=4.39), ແລະ ອາຍຸຕໍ່າກວ່າ 20 ປີ (ຄ່າສະເລ່ຍ=4.28) ຕາມລຳດັບ. ແລະ ທັງໝົດນີ້ແມ່ນຢູ່ໃນລະດັບຄວາມສຳຄັນຫຼາຍທີ່ສຸດ. ໃນການສຶກສາປັດໄຈ ທີ່ມີຜົນຕໍ່ການຕັດສິນໃຈບໍລິໂພກຜັກກະສິກຳສະອາດ ໃນນະຄອນປາກເຊ ແຂວງຈຳປາສັກ, ສຳລັບພາບລວມຜູ້ບໍລິໂພກຜັກກະສິກຳສະອາດທີ່ມີອາຍຸແຕກຕ່າງກັນ ໄດ້ໃຫ້ລະດັບຄວາມສຳຄັນຂອງປັດໄຈທີ່ມີຜົນຕໍ່ການຕັດສິນໃຈບໍລິໂພກຜັກກະສິກຳສະອາດ ພາຍໃນນະຄອນປາກເຊ, ແຂວງຈຳປາສັກ ທີ່ບໍ່ແຕກຕ່າງກັນ (F=1.055, P-value=0.387)

### ຄ. ປຽບທຽບທາງດ້ານລະດັບການສຶກສາ

ຜູ້ບໍລິໂພກຜັກກະສິກຳສະອາດ ຢູ່ໃນນະຄອນປາກເຊ ແຂວງຈຳປາສັກ ທີ່ມີລະດັບການສຶກສາສູງກວ່າປະລິນຍາຕີ (ຄ່າສະເລ່ຍ=4.63) ໃຫ້ຄວາມສຳຄັນກັບບັນດາປັດໄຈທີ່ມີຜົນຕໍ່ການຕັດສິນໃຈບໍລິໂພກຜັກກະສິກຳສະອາດ ພາຍໃນນະຄອນປາກເຊ ແຂວງຈຳປາສັກ ໂດຍລວມແມ່ນຫຼາຍກວ່າ ຜູ້ບໍລິໂພກຜັກກະສິກຳສະອາດທີ່ມີລະດັບການສຶກສາປະລິນຍາຕີ (ຄ່າສະເລ່ຍ=4.56) ແລະ ຜູ້ບໍລິໂພກຜັກກະສິກຳສະອາດທີ່ມີລະດັບການສຶກສາຕໍ່າກວ່າປະລິນຍາຕີ (ຄ່າສະເລ່ຍ=4.39) ລວມແລ້ວ ແມ່ນມີລະດັບຄວາມສຳຄັນຫຼາຍທີ່ສຸດ. ເຊິ່ງວ່າໃນພາບລວມຜູ້ບໍລິໂພກທີ່ມີລະດັບການສຶກສາທີ່ແຕກຕ່າງກັນ ໄດ້ໃຫ້ລະດັບຄວາມສຳຄັນຂອງປັດໄຈທີ່ຜົນຕໍ່ການຕັດສິນໃຈບໍລິໂພກຜັກກະສິກຳສະອາດ ພາຍໃນນະຄອນປາກເຊ, ແຂວງຈຳປາສັກ ແຕກຕ່າງກັນ (F=5.347, P-value=0.005)

### ງ. ປຽບທຽບທາງດ້ານອາຊີບ

ບໍລິໂພກທີ່ມີອາຊີບເປັນນັກຮຽນ-ນັກສຶກສາ (ຄ່າສະເລ່ຍ=4.61) ໃຫ້ຄວາມສຳຄັນກັບບັນດາປັດໄຈທີ່ມີຜົນຕໍ່ການຕັດສິນໃຈບໍລິໂພກຜັກກະສິກຳສະອາດ ພາຍໃນນະຄອນປາກເຊ ແຂວງຈຳປາສັກ ໂດຍລວມຫຼາຍກວ່າ ຜູ້ບໍລິໂພກທີ່ມີອາຊີບນັກທຸລະກິດ (ຄ່າສະເລ່ຍ=4.55), ມີອາຊີບເປັນພະນັກງານເອກະຊົນ/ວິສາຫະກິດ (ຄ່າສະເລ່ຍ=4.52), ມີອາຊີບເປັນພະນັກງານລັດ (ຄ່າ

ສະເລ່ຍ=4.50), ແລະ ມີອາຊີບເປັນແມ່ບ້ານ/ພໍ່ບ້ານ (ຄ່າສະເລ່ຍ=4.45) ຕາມລຳດັບ ແລະ ທັງໝົດນີ້ ແມ່ນຢູ່ໃນລະດັບຄວາມສຳຄັນຫຼາຍທີ່ສຸດ.

***ຈ. ປຽບທຽບທາງດ້ານລາຍໄດ້ຕໍ່ເດືອນ***

ທີ່ມີລາຍໄດ້ຫຼາຍຫວ່າ 5.500.000 ກີບ (ຄ່າສະເລ່ຍ=4.62) ໄດ້ໃຫ້ຄວາມສຳຄັນກັບບັນດາປັດໃຈທີ່ມີຜົນຕໍ່ການຕັດສິນໃຈບໍລິໂພກຜັກກະສິກຳສະອາດພາຍໃນນະຄອນປາກເຊ ແຂວງຈຳປາສັກໂດຍລວມຫຼາຍກວ່າ ຜູ້ບໍລິໂພກຜັກກະສິກຳສະອາດທີ່ມີລາຍໄດ້ໃນລະດັບຕ່າງໆ. ໃນພາບລວມຜູ້ບໍລິໂພກທີ່ມີລາຍໄດ້ແຕກຕ່າງກັນ ໄດ້ໃຫ້ລະດັບຄວາມສຳຄັນຂອງປັດໃຈທີ່ມີຜົນຕໍ່ການຕັດສິນໃຈເລືອກບໍລິໂພກຜັກກະສິກຳສະອາດ ພາຍໃນນະຄອນປາກເຊ, ແຂວງຈຳປາສັກ ບໍ່ແຕກຕ່າງກັນ (F=1.136, P-value=0.339).

### 4.4 ຜົນຂອງການວິເຄາະຄວາມສຳພັນຂອງປັດໃຈທີ່ມີຜົນ ຕໍ່ການຕັດສິນໃຈບໍລິໂພກ.

ປັດໃຈທາງດ້ານການຮັບຮູ້ຄຸນຄ່າດ້ານຜະລິດຕະພັນ ມີຄວາມສຳພັນກັບປັດໃຈທາງດ້ານການຮັບຮູ້ຄຸນຄ່າດ້ານຄວາມປອດໄພໃນລະດັບສູງຫຼາຍ ມີຄ່າສຳປະສິດຄວາມສຳພັນຄິດໄລ່ເປັນສ່ວນຮ້ອຍແມ່ນ 75.7% (r=0.757) ແລະ ມີຄວາມສາພັນກັບປັດໃຈດ້ານອື່ນໆໂດຍລຽງຕາມລຳດັບຄື: ປັດໃຈທາງດ້ານການຮັບຮູ້ຄຸນຄ່າດ້ານຜະລິດຕະພັນ ມີຄວາມສຳພັນກັບປັດໃຈທາງດ້ານການຮັບຮູ້ຄຸ່ນຄ່າດ້ານສຸຂະພາບໃນລະດັບສູງຫຼາຍ ມີຄ່າສຳປະສິດຄວາມສຳພັນຄິດໄລ່ເປັນສ່ວນຮ້ອຍແມ່ນ 72.5% (r=0.725), ຕໍ່ມາແມ່ນມີຄວາມສຳພັນກັບປັດໃຈທາງດ້ານການຮັບຮູ້ຄຸນຄ່າດ້ານສິ່ງແວດລ້ອມໃນລະດັບສູງຫຼາຍ ມີຄ່າສຳປະສິດຄວາມສຳພັນຄິດໄລ່ເປັນສ່ວນຮ້ອຍແມ່ນ 70.4% (r=0.704), ແລະ ສຸດທ້າຍແມ່ນ ມີຄວາມສຳພັນກັບປັດໃຈທາງດ້ານການຮັບຮູ້ຄຸ່ນຄ່າດ້ານລາຄາໃນລະດັບສູງ ມີຄ່າສຳປະສິດຄວາມສຳພັນຄິດໄລ່ເປັນສ່ວນຮ້ອຍແມ່ນ 64.4% (r=0.644). ໂດຍຖືເອົາຄ່າຄວາມສຳຄັນທາງດ້ານສະຖິຕິທີ່ 0.01

ປັດໃຈທາງດ້ານການຮັບຮູ້ຄຸນຄ່າດ້ານສິ່ງແວດລ້ອມ ມີຄວາມສຳພັນກັບປັດໃຈທາງດ້ານການຮັບຮູ້ຄຸນຄ່າດ້ານສຸຂະພາບໃນລະດັບສູງຫຼາຍ ມີຄ່າສຳປະສິດຄວາມສຳພັນຄິດໄລ່ເປັນສ່ວນຮ້ອຍແມ່ນ 74.5% (r=0.745) ແລະ ມີຄວາມສາພັນກັບປັດໃຈດ້ານອື່ນໆໂດຍລຽງຕາມລຳດັບຄື: ປັດໃຈທາງດ້ານການຮັບຮູ້ຄຸນຄ່າດ້ານສິ່ງແວດລ້ອມ ມີຄວາມສຳພັນກັບປັດໃຈທາງດ້ານການຮັບຮູ້ຄຸ່ນຄ່າດ້ານຄວາມປອດໄພໃນລະດັບສູງຫຼາຍ ມີຄ່າສຳປະສິດຄວາມສຳ ພັນຄິດໄລ່ເປັນສ່ວນຮ້ອຍແມ່ນ 71.5% (r=0.715), ຕໍ່ມາແມ່ນມີຄວາມສຳພັນກັບປັດໃຈທາງດ້ານການຮັບຮູ້ຄຸນຄ່າດ້ານລາຄາໃນລະດັບສູງ ມີຄ່າສຳປະສິດຄວາມສຳພັນຄິດໄລ່ເປັນສ່ວນຮ້ອຍແມ່ນ 66.6% (r= 0.666). ໂດຍຖືເອົາຄ່າຄວາມສຳຄັນທາງດ້ານສະຖິຕິທີ່ 0.01

ປັດໃຈທາງດ້ານການຮັບຮູ້ຄຸນຄ່າດ້ານສຸຂະພາບ ມີຄວາມສຳພັນກັບປັດໃຈທາງດ້ານການຮັບຮູ້ຄຸນຄ່າດ້ານຄວາມປອດໄພໃນລະດັບສູງຫຼາຍ ມີຄ່າສຳປະສິດຄວາມສຳພັນຄິດໄລ່ເປັນສ່ວນຮ້ອຍແມ່ນ 71.4% (r=0.714), ຮອງລົງມາແມ່ນມີຄວາມສາພັນກັບປັດໃຈທາງດ້ານການຮັບຮູ້ຄຸ່ນຄ່າດ້ານລາຄາໃນລະດັບສູງ ມີຄ່າສຳປະສິດຄວາມສຳພັນຄິດໄລ່ເປັນສ່ວນຮ້ອຍແມ່ນ 67.5% (r=0.675). ໂດຍຖືເອົາຄ່າຄວາມສຳຄັນທາງດ້ານສະຖິຕິທີ່ 0.01

ປັດໃຈທາງດ້ານການຮັບຮູ້ຄຸນຄ່າດ້ານຄວາມປອດໄພ ມີຄວາມສຳພັນກັບປັດໃຈທາງດ້ານການຮັບຮູ້ຄຸນຄ່າດ້ານລາຄາໃນລະດັບສູງ ມີຄ່າສຳປະສິດຄວາມສຳພັນຄິດໄລ່ເປັນສ່ວນຮ້ອຍແມ່ນ 64.9% (r= 0.649), ໂດຍຖືເອົາຄ່າຄວາມສາຄັນທາງດ້ານສະຖິຕິທີ່ 0.01

## 5. ວິພາກຜົນ

ຜົນຂອງການສຶກສາ ໄດ້ສະແດງໃຫ້ເຫັນວ່າ 1) ປັດໄຈ ທີ່ມີຜົນຕໍ່ການຕັດສິນໃຈບໍລິໂພກຜັກກະສິກຳສະອາດ ໃນນະຄອນປາກເຊ ແຂວງຈຳປາສັກ. ໂດຍລວມແລ້ວແມ່ນຢູ່ໃນລະດັບຫຼາຍທີ່ສຸດ ມີຄ່າສະເລ່ຍທີ່ 4.51, ເມື່ອແຍກລະອຽດແຕ່ລະປັດໄຈເຫັນໄດ້ວ່າ ອັນດັບທີ 1 ປັດໄຈທາງດ້ານການຮັບຮູ້ຄຸນຄ່າດ້ານຜະລິດ ຕະພັນ, ມີຄ່າສະເລ່ຍ 4.56 ມີລະດັບຄວາມສຳຄັນຫຼາຍທີ່ສຸດ, ຮອງລົງມາແມ່ນປັດໄຈທາງດ້ານການຮັບຮູ້ຄຸນຄ່າດ້ານຄວາມປອດໄພ ມີຄ່າສະເລ່ຍ 4.54 ມີລະດັບຄວາມຄວາມສຳຄັນຫຼາຍທີ່ສຸດ, ຕໍ່ມາແມ່ນປັດໄຈທາງດ້ານການຮັບຮູ້ຄຸນຄ່າດ້ານສິ່ງແວດລ້ອມ ມີຄ່າສະເລ່ຍ 4.50 ມີລະດັບຄວາມສຳຄັນຫຼາຍທີ່ສຸດ, ປັດໄຈທາງດ້ານການຮັບຮູ້ຄຸນຄ່າດ້ານສຸຂະພາບ 4.48 ມີລະດັບຄວາມສຳຄັນຫຼາຍທີ່ສຸດ, ປັດໄຈທາງດ້ານການຮັບຮູ້ຄຸນຄ່າດ້ານລາຄາ ມີຄ່າສະເລ່ຍ 4.46 ມີລະດັບຄວາມຄວາມສຳຄັນຫຼາຍທີ່ສຸດ. 2) ປຽບທຽບປັດໄຈ ທີ່ມີຜົນຕໍ່ການຕັດສິນໃຈບໍລິໂພກຜັກກະສິກຳສະອາດ ໃນນະຄອນປາກເຊ ແຂວງຈຳປາສັກ. ໂດຍຈຳແນກຕາມຂໍ້ມູນທົ່ວໄປຂອງຜູ້ບໍລິໂພກ ເຫັນວ່າ ຜູ້ບໍລິໂພກທີ່ມີເພດ ແຕກຕ່າງກັນ, ໄດ້ໃຫ້ຄວາມສຳຄັນຂອງປັດໄຈທີ່ມີຜົນຕໍ່ການຕັດສິນໃຈບໍລິໂພກຜັກກະສິກຳສະອາດ ບໍ່ແຕກຕ່າງກັນ. ຜູ້ບໍລິໂພກທີ່ມີອາຍຸ, ອາຊີບ, ລາຍໄດ້ ແຕກຕ່າງກັນ ໄດ້ໃຫ້ລະດັບຄວາມສຳຄັນຂອງປັດໄຈທີ່ມີຜົນຕໍ່ການຕັດສິນໃຈບໍລິໂພກຜັກກະສິກຳສະອາດ ບໍ່ແຕກຕ່າງກັນ. ຜູ້ບໍລິໂພກທີ່ມີລະດັບການສຶກສາ ແຕກຕ່າງກັນ ໄດ້ໃຫ້ລະດັບຄວາມສຳຄັນຂອງປັດໄຈທີ່ມີຜົນຕໍ່ການຕັດສິນໃຈບໍລິໂພກຜັກກະສິກຳສະອາດ ແຕກຕ່າງກັນ. 3) ສຶກສາຫາຄວາມສຳພັນຂອງ ປັດໄຈທີ່ມີຜົນຕໍ່ການຕັດສິນໃຈບໍລິໂພກຜັກກະສິກຳສະອາດ ໃນນະຄອນປາກເຊ ແຂວງຈຳປາສັກ ເຫັນວ່າຄວາມສຳພັນຂອງປັດໄຈທີ່ມີຜົນຕໍ່ການຕັດສິນໃຈບໍລິໂພກຜັກກະສິກຳສະອາດ ພາຍໃນນະຄອນປາກເຊ ແຂວງຈຳປາສັກມີຄວາມສຳພັນໂດຍລວມລະດັບສູງຫາສູງຫຼາຍ. ກະຕັນຢູ ຄະນິດສາຕຣານົນ (2015) ໄດ້ສຶກສາການຮັບຮູ້ຄຸນນະພາບ ແລະ ການສື່ສານທາງການຕະຫຼາດທີ່ສົ່ງຜົນຕໍ່ການຕັດສິນໃຈຊື້ຜະລິດຕະພັນປະເພດຜັກອໍແກນິກຂອງປະຊາຊົນໃນເຂດກຸງເທບມະຫານະຄອນ ຕົວຢ່າງທີ່ໃຊ້ໃນການສຶກສາ ຜູ້ບໍລິໂພກທີ່ເຄີຍໃຊ້ ຫຼື ຮູ້ຈັກຜະລິດຕະພັນປະເພດຜັກອໍແກນິກໃນເຂດກຸງເທບມະຫານະຄອນ ຈຳນວນ 400 ຕົວຢ່າງ ໂດຍໃຊ້ວິທີສຸ່ມຕົວຢ່າງແບບສະດວກ, ເຊິ່ງວ່າ ຜົນຂອງການສຶກສາແມ່ນ ການຮັບຮູ້ຄຸນນະພາບຂອງສິນຄ້າສົ່ງຜົນຕໍ່ການຕັດສິນໃຈຊື້ຜະລິດຕະພັນຜັກອໍແກນິກ ແລະ ການສື່ສານທາງການຕະຫຼາດສົ່ງຜົນຕໍ່ການຕັດສິນໃຈຊື້ຜະລິດຕະພັນຜັກອໍແກນິກ ນອກຈາກນີ້ ຜົນການສຶກສາຍັງພົບວ່າ ການຮັບຮູ້ຄຸນນະພາບຂອງສິນຄ້າ ແລະ ການສື່ສານທາງການຕະ ຫຼາດ ສົ່ງຜົນຕໍ່ການຕັດສິນໃຈຊື້ແຕກຕ່າງກັນ.

## 6. ສະຫຼຸບຜົນ

ຈາກຜົນຂອງການສຶກສາສະແດງໃຫ້ເຫັນວ່າ ກຸ່ມຕົວຢ່າງຜູ້ຕອບແບບສອບຖາມສ່ວນຫຼາຍເປັນເພດຍິງ, ເຊິ່ງສ່ວນຫຼາຍແມ່ນມີອາຍຸລະຫວ່າງ 21 ຫາ 30 ປີ, ມີລະດັບການສຶກສາສ່ວນຫຼາຍແລ້ວແມ່ນຕໍ່າກວ່າປະລິນຍາຕີ, ມີອາຊີບເປັນພະນັກງານເອກະຊົນ/ລັດວິສະຫະກິດ ແລະ ມີລາຍໄດ້ຢູ່ລະຫວ່າງ 1,501,000 ຫາ 3,000,000 ກີບ.

ການຕັດສິນໃຈຂອງຜູ້ບໍລິໂພກ ພາຍໃນນະຄອນປາກເຊ ແຂວງຈຳປາສັກ ພາບລວມແລ້ວປັດໄຈທາງດ້ານຕ່າງໆແມ່ນໃຫ້ຄວາມສຳຄັນຫຼາຍທີ່ສຸດ, ໂດຍສະເພາະແມ່ນປັດໄຈທາງດ້ານການຮັບຮູ້ຄຸນຄ່າດ້ານຜະລິດຕະພັນ ແມ່ນມີຄວາມສຳຄັນຫຼາຍທີ່ສຸດ, ປັດໄຈທາງດ້ານການຮັບຮູ້ຄຸນຄ່າດ້ານຄວາມປອດໄພ, ປັດໄຈທາງດ້ານການຮັບຮູ້ຄຸນຄ່າດ້ານສິ່ງແວດລ້ອມ, ປັດໄຈທາງດ້ານການຮັບຮູ້ຄຸນຄ່າດ້ານສຸຂະພາບ ແລະ ປັດໄຈທາງດ້ານການຮັບຮູ້ຄຸນຄ່າດ້ານລາຄາ.

ປັດໄຈທາງດ້ານການຮັບຮູ້ຄຸນຄ່າດ້ານ ຜະລິດຕະພັນນັ້ນ, ຜົນຂອງການວິເຄາະເຫັນໄດ້ວ່າ ຜູ້ບໍລິໂພກ ໄດ້ໃສ່ໃຈຕໍ່ຄວາມສົດໃໝ່ໄດ້ດີນຂອງ ຜະລິດຕະພັນກະສິກຳສະອາດ ແມ່ນມີຄວາມສຳຄັນຫຼາຍທີ່ສຸດ.

ປັດໄຈດ້ານການຮັບຮູ້ດ້ານຄວາມປອດໄພ, ຈາກຜົນຂອງການວິເຄາະເຫັນໄດ້ວ່າ ຜູ້ບໍລິໂພກແມ່ນເຊື່ອວ່າ ຜະລິດ ຕະພັນກະສິກຳສະອາດແມ່ນມີຄວາມປອດໄພຕໍ່ການບໍລິໂພກ ເຊິ່ງໄດ້ໃຫ້ຄວາມສຳຄັນໃນລະດັບຫຼາຍທີ່ສຸດ.

ປັດໄຈທາງດ້ານການຮັບຮູ້ດ້ານສິ່ງແວດລ້ອມ, ສຳລັບພາບລວມແລ້ວຜູ້ບໍລິໂພກແມ່ນໃຫ້ຄວາມສຳຄັນກັບປັດໄຈໃນການນຳໃຊ້ພະລັງງານໜ້ອຍລົງເຊິ່ງມີລະດັບຄວາມສຳຄັນທີ່ຫຼາຍທີ່ສຸດ.

ປັດໄຈທາງດ້ານການຮັບຮູ້ຄຸນຄ່າດ້ານສຸຂະພາບ, ຈາກຜົນຂອງການວິເຄາະເຫັນໄດ້ວ່າ ຜູ້ບໍລິໂພກໄດ້ໃກ້ຄວາມສຳຄັນຕໍ່ກັບປັດໄຈທີ່ສິ່ງຜົນເຮັດໃຫ້ລະບົບຂັບຖ່າຍຂອງຜູ້ບໍລິໂພກຜັກກະສິກຳສະອາດມີການດຳເນີນການດ້ວຍດີ ເຊິ່ງມີລະດັບຄວາມສຳຄັນຫຼາຍທີ່ສຸດ.

ປັດໄຈທາງດ້ານການຮັບຮູ້ຄຸນຄ່າດ້ານລາຄາ, ຜູ້ບໍລິໂພກໄດ້ໃຫ້ຄວາມສຳຄັນກັບຄຸນຄ່າທາງດ້ານລາຄາກ່ຽວກັບ ລາຄາຂອງຜະລິດຕະພັນກະສິກຳແມ່ນມີຄວາມສົມເຫດສົມຜົນກັບສິ່ງທີ່ໄດ້ຮັບ, ມີລະດັບຄວາມສຳຄັນຫຼາຍທີ່ສຸດ

ດ້ານຂໍ້ມູນທົ່ວໄປຂອງຜູ້ບໍລິໂພກກຸ່ມຕົວຢ່າງທີ່ແຕກຕ່າງກັນ ມີຜົນຕໍ່ການໃຫ້ຄວາມສຳ ຄັນຂອງປັດໄຈທີ່ມີຜົນຕໍ່ການຕັດສິນໃຈບໍລິໂພກຜັກກະສິກຳສະອາດ ພາຍໃນນະຄອນປາກເຊ ແຂວງຈຳປາສັກ, ຜົນຂອງການທົດສອບສົມມຸດຖານທີ່ສາມາດຍອມຮັບໄດ້ແມ່ນ ຄວາມແຕກຕ່າງທາງດ້ານການສຶກສາຂອງ ຜູ້ບໍລິໂພກກຸ່ມຕົວຢ່າງ ສົ່ງຜົນໃຫ້ການຕັດສິນໃຈບໍລິໂພກຜັກກະສິກຳສະອາດ ມີຄວາມແຕກຕ່າງກັນ, ສ່ວນຄວາມແຕກຕ່າງທາງດ້ານເພດ, ອາຍຸອາຊີບ ແລະ ລາຍໄດ້ ທີ່ແຕກຕ່າງກັນ ແມ່ນໄດ້ໃຫ້ຄວາມສຳຄັນຂອງປັດໄຈທີ່ມີຜົນຕໍ່ການຕັດສິນໃຈບໍລິໂພກຜັກກະສິ ກຳສະອາດ ພາຍໃນນະຄອນປາກເຊ ແຂວງຈຳປາສັກ ທີ່ ບໍ່ແຕກຕ່າງກັນ.

ຄວາມສຳພັນຂອງປັດໄຈທີ່ມີຜົນຕໍ່ການຕັດສິນໃຈບໍລິໂພກຜັກກະສິກຳສະອາດ ພາຍໃນນະ ຄອນປາກເຊ ແຂວງຈຳປາສັກ ໃນພາບລວມແລ້ວບໍລິໂພກກຸ່ມຕົວຢ່າງ ໄດ້ແກ່ ປັດໄຈທາງດ້ານການຮັບຮູ້ດ້ານຜະລິດຕະພັນ, ປັດໄຈທາງດ້ານການຮັບຮູ້ຄຸນຄ່າດ້ານສິ່ງແວດລ້ອມ, ປັດໄຈທາງດ້ານການຮັບຮູ້ຄຸນຄ່າດ້ານສຸຂະພາບ, ປັດໄຈທາງດ້ານການຮັບຮູ້ຄຸນຄ່າດ້ານຄວາມປອດໄພ, ປັດໄຈທາງດ້ານການຮັບຮູ້ຄຸນຄ່າດ້ານລາຄາ ແມ່ນມີຄວາມສຳພັນກັນທັງໝົດໃນລະດັບສູງຫາສູງຫຼາຍ, ໂດຍມີຄ່າຄວາມສຳຄັນທາງດ້ານສະຖິຕິເທົ່າກັບ 0.05

## 7. ຄວາມຮູ້ບຸນຄຸນ

ຄະນະສຶກສາຂໍສະແດງຄວາມຮູ້ບຸນຄຸນ ແລະ ຄວາມຂອບໃຈຢ່າງສູງມາຍັງຄະນະຄູສອນຄະນະເສດຖະສາດ ແລະ ການຄຸ້ມຄອງ ມະຫາວິທະຍາໄລ ຈຳປາສັກ, ທີ່ໄດ້ອຳນວຍຄວາມສະດວກໃນການເຮັດການສຶກສາໃນຄັ້ງນີ້, ຂໍສະແດງຄວາມຮູ້ບຸນຄຸນມາຍັງຄູອາຈານ ທີ່ໃຫ້ການຊ່ວຍເຫຼືອໃນການສະໜອງຂໍ້ມູນທີ່ຈຳເປັນສຳລັບການສຶກສາໃນຄັ້ງນີ້.

## 8. ເອກະສານອ້າງອີງ

ກະຕັນຍູ ຄະນິດສາຕຣານົນ (2015), ການຮັບຮູ້ຄຸນະພາບ ແລະ ການສື່ສານ ທີ່ສົ່ງຜົນຕໍ່ການຕັດສິນໃຈຊື້ຜະລິດຕະພັນປະເພດຜັກ ອໍແກ

ນິກ ຂອງປະຊາຊົນໃນເຂດກຸງເທບມະຫານະຄອນ, ມະຫາວິທະຍາໄລກຸງເທບ (ພາສາໄທ)

ທະວັນຍາ ສິທິບົດ ແລະ ທີລະເວດ ທິດສິແສງ (2016), ປັດໄຈດ້ານຄວາມຄິດເຫັນທີ່ມີຜົນຕໍ່ພຶດຕິກຳການຊື້ເຂົ້າອິນຊີ ຂອງຜູ້ບໍລິໂພກ. ສະຖາບັນເທັກໂນໂລຊີ ພະຈອມເກົ້າຄຸນະພທະຫານລາດກະບັງ. (ພາສາໄທ) [http://www.lib.ku.ac.th/KUCONF/2559/KC5315004.pdf](http://www.lib.ku.ac.th/KUCONF/2559/KC5315004.pdf).

ພອນທິບ ສົມມະນີ. (2020) ບົດນຳສະເໜີ ການພັດທະນາກະສິກຳສະອາດ ເພື່ອຄ້ຳປະກັນສະບຽງອາຫານ ແລະ ຜະລິດເປັນສິນຄ້າຢູ່ ສປປ ລາວ, ພະແນກມາດຕະຖານ, ກົມປູກຝັງ, ກະຊວງກະສິກາ ແລະ ປ່າໄມ້.

ພະແນກສາທາລະນະສຸກແຂວງຈຳປາສັກ. (2023). ບົດສະຫຼຸບການຈັດຕັ້ງປະຕິບັດວຽກງານສາທາລະນະສຸກ ປີ 2022 ແລະ ທິດທາງແຜນການປີ 2023

ມູລະນິທິກະສິກຳຍືນຍົງ. (2014). ແນວທາງກະເສດອິນຊີ, [www.greennet.or.th/article/86](http://www.greennet.or.th/article/86), (ພາສາໄທ)

ວິກິພີເດຍ ສາລານຸກົມເສລີ. (2022). ແຂວງຈຳປາສັກ, ດັດແກ້ຄັ້ງລ້າສຸດເມື່ອວັນທີ 5 ກຸມພາ 2022, ເວລາ 17:30 ໂມງ, www.wikipedia.org/wiki/ແຂວງຈຳປາສັກ#ອ້າງອີງ

ວຽງສະໄໝ ແສງສຸລິວົງ. (2017). ບົດນຳສະເໜີການພັດທະນາການຮັບຮອງ ແລະ ຢັ້ງຢືນກະສິກຳສະອາດ (ກະສິກຳອິນຊີ OA ແລະ ກະສິກຳທີ່ດີ GAP) , ພະແນກມາດຕະຖານ, ກົມປູກຝັງ, ກະຊວງກະສິກຳ ແລະ ປ່າໄມ້

ອອນນຸດ ອາດປະຈົນ ແລະ ເບນຈາມາດ ອິສອນເດດ (2015). ຄວາມຮູ້ ແລະ ພຶດຕິກຳການບໍລິໂພກຜັກປອດສານພິດຂອງຜູ້ບໍລິໂພກ ໃນກຸງເທບມະຫານະຄອນ, ການສຶກສາສະເພາະບຸກຄົນ ປະລິນຍາບັນດິດ, ມະຫາວິທະຍາໄລທຸລະກິດບັນດິດ. (ພາສາໄທ).

Anderson, C. (2006). The long tail: Why the future of business is selling less of more. New York: Hyperion.

Ahmad, S.N.B. & Juhdi, N. (2010). Consumer's perception and purchase intentions towards organic food products: Exploring attitude among Malaysian consumers. Unpublished doctoral dissertation, Tun Abdul University, United Kingdom

Cochran, W.G. ( .(1953Sampling Techniques. New York : John Wiley & Sons.

Sipaseuth K. and W. Roder, 2004. Organic agriculture production and marketing in Lao PDR. Paper presented, Seminar on organic farming for sustainable agriculture in Taichung, Taiwan ROC, FAO.

ຕາຕະລາງທີ 3. ຄ່າສະເລ່ຍ, ຄ່າຜັນປ່ຽນມາດຕະຖານ ແລະ ການແປຜົນ ລະດັບຄວາມສຳຄັນໂດຍລວມຂອງບັນດາປັດໄຈທີ່ມີຜົນຕໍ່ການຕັດສິນໃຈບໍລິໂພກຜັກກະສິກຳສະອາດ ໃນນະຄອນປາກເຊ ແຂວງຈຳປາສັກ

| ລະດັບຄວາມຄວາມສຳຄັນຂອງປັດໄຈ | ຄ່າສະເລ່ຍ ($\bar{X}$) | S.D | ການແປຜົນ |
|---|---|---|---|
| 1. ການຮັບຮູ້ທາງດ້ານລາຄາ | 4.46 | 0.58 | ຫຼາຍທີ່ສຸດ |
| 2. ການຮັບຮູ້ທາງດ້ານຄວາມປອດໄພ | 4.54 | 0.66 | ຫຼາຍທີ່ສຸດ |
| 3. ການຮັບຮູ້ທາງດ້ານສຸຂະພາບ | 4.48 | 0.71 | ຫຼາຍທີ່ສຸດ |
| 4. ການຮັບຮູ້ທາງດ້ານສິ່ງແວດລ້ອມ | 4.50 | 0.78 | ຫຼາຍທີ່ສຸດ |
| 5. ການຮັບຮູ້ທາງດ້ານຜະລິດຕະພັນ | 4.56 | 0.58 | ຫຼາຍທີ່ສຸດ |
| ລວມ | 4.51 | 0.52 | ຫຼາຍທີ່ສຸດ |

ຕາຕະລາງທີ 4. ການປຽບທຽບ ລະດັບຄວາມສຳຄັນຂອງປັດໄຈທີ່ມີຜົນຕໍ່ການຕັດສິນໃຈບໍລິໂພກຜັກກະສິກຳສະອາດ ພາຍໃນນະຄອນປາກເຊ ແຂວງຈຳປາສັກ, ແຍກຕາມເພດ.

| ລະດັບຄວາມສຳຄັນຂອງປັດໄຈ | ຊາຍ | | ຍິງ | | t | Sig P-value | ແປຜົນ |
|---|---|---|---|---|---|---|---|
| | ຄ່າສະເລ່ຍ | S.D | ຄ່າສະເລ່ຍ | S.D | | | |
| ດ້ານລາຄາ | 4.50 | 0.52 | 4.43 | 0.60 | 1.044 | 0.297 | ບໍ່ແຕກຕ່າງ |
| ດ້ານຄວາມປອດໄພ | 4.55 | 0.60 | 4.52 | 0.68 | 0.505 | 0.614 | ບໍ່ແຕກຕ່າງ |
| ດ້ານສຸຂະພາບ | 4.52 | 0.59 | 4.51 | 0.62 | 0.055 | 0.956 | ບໍ່ແຕກຕ່າງ |
| ດ້ານສິ່ງແວດລ້ອມ | 4.55 | 0.65 | 4.47 | 0.71 | 1.094 | 0.275 | ບໍ່ແຕກຕ່າງ |
| ດ້ານຜະລິດຕະພັນ | 4.57 | 0.58 | 4.54 | 0.58 | 0.356 | 0.722 | ບໍ່ແຕກຕ່າງ |
| ພາບລວມ | 4.53 | 0.50 | 4.50 | 0.53 | 0.464 | 0.643 | ບໍ່ແຕກຕ່າງ |

ຕາຕະລາງທີ 5. ການປຽບທຽບ ລະດັບຄວາມສຳຄັນຂອງປັດໄຈທີ່ມີຜົນຕໍ່ການຕັດສິນໃຈບໍລິໂພກຜັກກະສິກຳສະອາດ ພາຍໃນນະຄອນປາກເຊ ແຂວງຈຳປາສັກ, ແຍກຕາມອາຍຸ

| ລະດັບຄວາມສຳຄັນຂອງປັດໄຈ | ຕໍ່າກວ່າ 20 | | 21-30 ປີ | | 31-40 ປີ | | 41-50 ປີ | | 51 ປີຂຶ້ນໄປ | |
|---|---|---|---|---|---|---|---|---|---|---|
| | X | S.D | X | S.D | X | S.D | X | S.D | X | S.D |
| ດ້ານລາຄາ | 3.91 | 0.58 | 4.48 | 0.54 | 4.47 | 0.58 | 4.38 | 0.69 | 4.25 | 0.61 |
| ດ້ານຄວາມປອດໄພ | 4.25 | 0.82 | 4.58 | 0.56 | 4.45 | 0.67 | 4.29 | 0.92 | 4.50 | 0.63 |
| ດ້ານສຸຂະພາບ | 4.66 | 0.25 | 4.54 | 0.58 | 4.49 | 0.62 | 4.48 | 0.74 | 4.41 | 0.66 |
| ດ້ານສິ່ງແວດລ້ອມ | 4.41 | 0.58 | 4.55 | 0.61 | 4.48 | 0.71 | 4.31 | 0.94 | 4.25 | 0.82 |
| ດ້ານຜະລິດຕະພັນ | 4.25 | 0.52 | 4.59 | 0.52 | 4.54 | 0.62 | 4.43 | 0.70 | 4.75 | 0.41 |
| ພາບລວມ | 4.28 | 0.47 | 4.55 | 0.47 | 4.51 | 0.53 | 4.39 | 0.71 | 4.45 | 0.55 |

ຕາຕະລາງ 6. ການປຽບທຽບ ລະດັບຄວາມສຳຄັນຂອງປັດໄຈທີ່ມີຜົນຕໍ່ການຕັດສິນໃຈບໍລິໂພກຜັກກະສິກຳ ສະອາດ ພາຍໃນນະຄອນປາກເຊ ແຂວງຈຳປາສັກ, ແຍກຕາມລະດັບການສຶກສາ

| ລະດັບຄວາມສຳຄັນຂອງປັດໄຈ | ຕ່ຳກວ່າປະລິນຍາຕີ | | ປະລິນຍາຕີ | | ສູງກວ່າປະລິນຍາຕີ | |
|---|---|---|---|---|---|---|
| | X | S.D | X | S.D | X | S.D |
| ດ້ານລາຄາ | 4.32 | 0.63 | 4.51 | 0.54 | 4.46 | 0.57 |
| ດ້ານຄວາມປອດໄພ | 4.42 | 0.71 | 4.56 | 0.63 | 4.68 | 0.55 |
| ດ້ານສຸຂະພາບ | 4.39 | 0.65 | 4.57 | 0.59 | 4.56 | 0.60 |
| ດ້ານສິ່ງແວດລ້ອມ | 4.36 | 0.73 | 4.54 | 0.67 | 4.68 | 0.58 |
| ດ້ານຜະລິດຕະພັນ | 4.40 | 0.65 | 4.61 | 0.54 | 4.65 | 0.52 |
| ພາບລວມ | 4.39 | 0.54 | 4.56 | 0.50 | 4.63 | 0.48 |

ຕາຕະລາງທີ 7. ການປຽບທຽບ ລະດັບຄວາມສຳຄັນຂອງປັດໄຈທີ່ມີຜົນຕໍ່ການຕັດສິນໃຈບໍລິໂພກຜັກກະສິກຳ ສະອາດ ພາຍໃນນະຄອນປາກເຊ ແຂວງຈຳປາສັກ, ແຍກຕາມອາຊີບ

| ລະດັບຄວາມສຳຄັນຂອງປັດໄຈ | ນັກຮຽນ-ສຶກສາ | | ເຈົ້າຂອງທຸລະກິດ | | ເອກະຊົນ/ວິສາຫະກິດ | | ພະນັກງານລັດ | | ແມ່ບ້ານ/ພໍ່ບ້ານ | |
|---|---|---|---|---|---|---|---|---|---|---|
| | X | S.D | X | S.D | X | S.D | X | S.D | X | S.D |
| ດ້ານລາຄາ | 4.78 | 0.39 | 4.53 | 0.56 | 4.47 | 0.50 | 4.44 | 0.61 | 4.31 | 0.68 |
| ດ້ານຄວາມປອດໄພ | 4.64 | 0.62 | 4.60 | 0.67 | 4.52 | 0.58 | 4.53 | 0.59 | 4.43 | 0.86 |
| ດ້ານສຸຂະພາບ | 4.64 | 0.47 | 4.53 | 0.63 | 4.52 | 0.54 | 4.50 | 0.62 | 4.46 | 0.73 |
| ດ້ານສິ່ງແວດລ້ອມ | 4.35 | 0.69 | 4.56 | 0.72 | 4.53 | 0.63 | 4.48 | 0.65 | 4.36 | 0.82 |
| ດ້ານຜະລິດຕະພັນ | 4.85 | 0.37 | 4.56 | 0.61 | 4.55 | 0.55 | 4.53 | 0.56 | 4.53 | 0.67 |
| ພາບລວມ | 4.61 | 0.40 | 4.55 | 0.55 | 4.52 | 0.46 | 4.50 | 0.49 | 4.45 | 0.64 |

ຕາຕະລາງທີ 8. ການປຽບທຽບ ລະດັບຄວາມສຳຄັນຂອງປັດໄຈທີ່ມີຜົນຕໍ່ການຕັດສິນໃຈບໍລິໂພກຜັກກະສິກຳ ສະອາດ ພາຍໃນນະຄອນປາກເຊ ແຂວງຈຳປາສັກ, ແຍກຕາມລາຍໄດ້

| ລະດັບຄວາມສຳຄັນຂອງປັດໄຈ | ຕ່ຳກວ່າ 1.5 ລ້ານ | | 1.5-3 ລ້ານ | | 3-4.5 ລ້ານ | | 4.5-5.5 ລ້ານ | | 5.5 ລ້ານຂຶ້ນໄປ | |
|---|---|---|---|---|---|---|---|---|---|---|
| | X | S.D | X | S.D | X | S.D | X | S.D | X | S.D |
| ດ້ານລາຄາ | 4.50 | 0.60 | 4.45 | 0.57 | 4.38 | 0.65 | 4.41 | 0.62 | 4.60 | 0.38 |
| ດ້ານຄວາມປອດໄພ | 4.63 | 0.56 | 4.52 | 0.62 | 4.36 | 0.91 | 4.56 | 0.69 | 4.64 | 0.58 |
| ດ້ານສຸຂະພາບ | 4.57 | 0.52 | 4.51 | 0.60 | 4.30 | 0.73 | 4.55 | 0.65 | 4.61 | 0.55 |
| ດ້ານສິ່ງແວດລ້ອມ | 4.55 | 0.67 | 4.48 | 0.66 | 4.32 | 0.86 | 4.50 | 0.74 | 4.66 | 0.58 |
| ດ້ານຜະລິດຕະພັນ | 4.54 | 0.58 | 4.56 | 0.55 | 4.41 | 0.78 | 4.60 | 0.58 | 4.58 | 0.55 |
| ພາບລວມ | 4.57 | 0.43 | 4.50 | 0.50 | 4.37 | 0.67 | 4.53 | 0.56 | 4.62 | 0.46 |

ຕາຕະລາງ 9. ການວິເຄາະຫາຄວາມສໍາພັນຂອງ ປັດໃຈທີ່ມີຜົນຕໍ່ການຕັດສິນໃຈບໍລິໂພກຜັກກະສິກໍາສະອາດ ພາຍໃນນະຄອນປາກເຊ ແຂວງຈໍາປາສັກ.

| **ຄວາມສໍາພັນຂອງປັດໃຈທີ່ມີຜົນຕໍ່ການຕັດສິນໃຈບໍລິໂພກ** | **ດ້ານລາຄາ** | **ດ້ານຄວາມປອດໄພ** | **ດ້ານສຸຂະພາບ** | **ດ້ານສິ່ງແວດລ້ອມ** | **ດ້ານຜະລິດຕະພັນ** |
|---|---|---|---|---|---|
| ດ້ານລາຄາ | - | - | - | - | - |
| ຄວາມປອດໄພ | 0.649** | - | - | - | - |
| ສຸຂະພາບ | 0.675** | 0.714** | - | - | - |
| ສິ່ງແວດລ້ອມ | 0.666** | 0.715** | 0.745** | - | - |
| ຜະລິດຕະພັນ | 0.644** | 0.757** | 0.725** | 0.704** | - |

ໝາຍເຫດ: **correction is significant at the 0.01 level (2-tailed)